Ok Magazine
November 2016

# ສະເໜ່ສວນຫລວງພຣະບາງ

## ~ ຜາຕັດແກ້ ~



Photo by Paul Wager

## ~ Pha Tad Ke ~

# Luang Prabang's Garden of Eden

by Suzy Young

Luang Prabang has everything the thinking tourist could want – splendid temples, unique culture, wonderful people and extraordinary natural beauty.

This gracious town now puts on display Laos' fabulous flora. After seven years of planning, researching, collecting and planting, the recently opened Pha Tad Ke Botanical Garden, the first ever in this landlocked country, is another reason to visit this World Heritage Site.




Pha Tad Ke fieldtrip collecting seed

ຫຼວງພຣະບາງນັບວ່າເປັນເມືອງແຫ່ງສະຫວັນແຫ່ງການທ່ອງທ່ຽວ ແລະພັກຜ່ອນທີ່ນັກເດີນທາງຕ່າງກໍໃຝ່ຝັນເຖິງ - ທັງວັດວາອາຮາມ, ຮີດຄອງປະເພນີ, ຄວາມເປັນມິດ ແລະການຕ້ອນຮັບ ແລະຍັງມີທຳມະຊາດທີ່ເກີນຄຳບັນລະຍາຍ.

ພາຍຫຼັງການທົດລອງ, ຄົ້ນຄ້ວາສະສົມ ແລະປູກພືດພັນດອກໄມ້ນາໆພັນມາເປັນເວລາເຈັດປີ ສະຖານທີ່ແຫ່ງນີ້ຈຶ່ງກາຍມາເປັນສວນດອກໄມ້ ຜາຕັດແກ້ ເຊິ່ງເປັນແຫ່ງທຳອິດຂອງປະເທດ, ຍິ່ງເປັນອີກເຫດຜົນໜຶ່ງທີ່ເຮັດໃຫ້ເມືອງມໍລະດົກໂລກແຫ່ງນີ້ເປັນທີ່ຫຼົງໄຫຼ ແລະໜ້າມາທ່ຽວຊົມຫຼາຍຂຶ້ນ.

ພາກເໜືອຂອງລາວເປັນເຂດທີ່ເຕັມໄປດ້ວຍສາຍພູຊຽວລຽງລາຍສຼັບກັບເປັນແຖບຊື່ວສຸດສາຍຕາ, ທັງຜາຫີນຕັ້ງ ແລະ ສາຍນ້ຳນ້ອຍໃຫຍ່ຍາວຢຽດດັ່ງງູເຫຼືອມ, ນັບວ່າເປັນສະຫວັນແກ່ນັກທ່ອງທ່ຽວທີ່ມັກໃນການຍ່າງ ແລະຊື່ນຊົມປ່າໄມ້ທຳມະຊາດ. ແຕ່ໜ້ອຍຄົນທີ່ຈະຮູ້ຈັກວ່າປະເທດລາວເປັນປະເທດໜຶ່ງທີ່ມີຊີວະນາໆພັນຫຼາຍທີ່ສຸດໃນໂລກ - ເຊິ່ງເປັນຊັບພະຍາກອນອັນສຳຄັນແກ່ອານະຄົດຂອງໂລກ.

ຄວາມອຸດົມສົມບູນຂອງຊັບພະຍາກອນທຳມະຊາດສ່ວນຫຼາຍແມ່ນຍັງບໍ່ໃຫ້ມີແຕະຕ້ອງ ແລະຍາກທີ່ຈະເຂົ້າເຖິງ. ແຕ່ມາໃນປັດຈຸບັນ, ເນື້ອທີ່ຫຼາຍກວ່າສິບສີ່ເຮັກຕາຕັ້ງຢູ່ແຄມນ້ຳແຫ່ງນີ້ໄດ້ເປີດໂອກາດໃຫ້ນັກທ່ອງທ່ຽວສາມາດສຳຜັດເຖິງຄວາມລຶກລັບຂອງປ່າດົງພົງໄພ, ໂດຍມີການສ້າງທາງຍ່າງສະເພາະໃຫ້ທ່ຽວຊົມສວນທີ່ເຕັມໄປດ້ວຍພືດຫຼາຍຊະນິດເຊັ່ນ: ຂີງ, ຂ່າ, ໜໍ່ໄມ້ ແລະດອກກ້ວຍໄມ້ຫຼາກຫຼາຍສີ ທີ່ຖືກວາງຕົກແຕ່ງຕາມຜາຫີນໃຫຍ່ປິ່ນໜ້າໄປທາງຕາເວັນຕົກສ່ຽງເໜືອຂອງແມ່ນ້ຳຂອງຢ່າງສວຍສົດງົດງາມ.
ຈຸດເດັ່ນສະເພາະຂອງສວນແມ່ນໜານພືດພັນ ແລະວັກທີ່ໃຊ້ສຳລັບການປຸງແຕ່ງອາຫານ ແລະການຢາ, ເຊິ່ງຜູ້ທ່ຽວຊົມສາມາດຮຽນຮູ້ ແລະ ສຶກສາກ່ຽວກັບການນຳໃຊ້ພືດຕ່າງໆເຂົ້າໃນການປິ່ນປົວແບບພື້ນເມືອງ. ໜານພືດການຢາແມ່ນໃຫ້ຫຼາຍກວ່າຄວາມສວຍສົດງົດງາມ, ແລະຍັງສະທ້ອນເຖິງຄວາມຮູ້ຂອງບັນດາຊົນເຜົ່າໃນລາວກ່ຽວກັບການນຳໃຊ້ພືດດັ່ງກ່າວເຂົ້າໃນການປຸງແຕ່ງອາຫານ, ປິ່ນປົວຮັກສາ, ນຳໃຊ້ທາງ





Spirithouse Pha Tad Ke

Northern Laos is a natural paradise of green mountains, stunning cliffs and mighty rivers, and is a favourite of trekkers and travellers, whether on foot or on wheels. But few people know that Laos is one of the most biodiverse countries on the planet – an essential asset to the future of our earth. This means there are more different species of plants here than in most places.



Open: 8 am-6 pm (Every day except Wednesday)

Much of this rich natural treasure remains untouched and inaccessible. But now, over fourteen hectares of riverside land, travellers can see first-hand what those deep forested valleys hold. Visitors can follow paths winding through gardens of ginger and palms, bamboo and orchids, arranged around a massive rocky cliff overlooking the north-western side of the Mekong River.

The centrepiece is the special garden of medicinal and culinary plants, where you can learn more of the traditional lore associated with an incredible variety of flora. More than simply beautiful, the medicinal gardens give insights into the traditional knowledge of generations of Lao ethnic groups about the culinary, medicinal, spiritual and decorative uses of myriad different plants. This knowledge has been handed down from the elders, but always orally and never written. So it is now in danger of being lost if a careful process of collecting, cataloguing and recording is not undertaken.

Pha Tad Ke staff have been busy doing just that for years already, travelling to remote areas, talking with villagers, collecting samples and carefully growing new specimens for study and display. Eventually the garden will include a research centre to continue the work of finding out more of nature's secrets from these plants.

Meanwhile, dried specimens are being carefully collected and stored in a herbarium, which will serve as a permanent collection of the extraordinary diversity found here. Located across the Mekong River from the southern outskirts of Luang Prabang, the land on which the gardens are built was once the private retreat of the royal family. A visit to Pad Thad Ke begins at the Reception Centre on the river road in town, where you will board the boat for a relaxing 15-minute ride across the swirling mud-brown waters.

At the garden, visitors follow wide paths around the various plantings, complete with informative signage, ponds full of water lilies, and eventually settle down for a very special meal in the café located by extensive pools of blooming lotus flowers. More than a simple picnic, the restaurant lunch is a chance to savour delicious and innovative fresh food based on traditional Lao cuisine and designed by a Lao chef who has been delighting diners in the US. All ingredients are sourced from the lush countryside around Luang Prabang.

Pha Tad Ke staff have already been active teaching in local schools about organic gardening, encouraging projectsby young Lao people to showcase local culture and organising creative photography training and competitions, among other programs. There will also be a focus on local handicrafts and produce with a range of quality products, including educational Pa Thad Ke publications, on sale in the shop. There will be opportunities to learn more about these crafts in how-to classes with local artisans who work with natural, plant-based products.

So do yourself, and Mother Nature, a favour and book now for your day at the Pha Tad Ke Botanical Garden--- the perfect complement to your stay in this delightful part of Laos.

Pha Tad Ke staff have already been active teaching in local schools about organic gardening, encouraging projects by young Lao people to showcase local culture and organising creative photography training and competitions, among other programs. There will also be a focus on local handicrafts and produce with a range of quality products, including educational Pa Thad Ke publications, on sale in the shop. There will be opportunities to learn more about these crafts in how-to classes with local artisans who work with natural, plant-based products.

So do yourself, and Mother Nature, a favour and book now for your day at the Pha Tad Ke Botanical Garden--- the perfect complement to your stay in this delightful part of Laos.

## Getting There

Located 15 minutes, by boat, from Luang Prabang. To access the garden visitors can catch a boat from downtown reception in Ban Wat That.

www.pha-tad-ke.com






*Photo by Paul Wager*

ສາສະໜາ ແລະການຕົກແຕ່ງຕ່າງໆບາງ ເຊິ່ງຄວາມຮູ້ເລົ່ານີ້ໄດ້ຖ່າຍທອດມາຍັງຮຸ່ນຫຼັງ ໂດຍປາສະຈາກການຂີດຂຽນເປັນລາຍລັກອັກສອນ ແຕ່ຜ່ານການບອກເລົ່າເທົ່ານັ້ນ. ມາໃນປັດຈຸບັນຄວາມຮູ້ເລົ່ານີ້ອາດສູນຫາຍໄປ ຫາກຍັງບໍ່ມີການອານຸຮັກ ແລະ ປົກປັກຮັກສາໄວ້.

ພະນັກງານທີ່ ຜາຕັດແກ້ ໄດ້ລົງພື້ນທີ່ໃນເຂດທາງໄກມາເປັນເວລາຫຼາຍປີ, ໂດຍຈະເດີນທາງພົບປະປະຊາຊົນທ້ອງຖິ່ນເພື່ອເກັບກຳບັນທຶກຂໍ້ມູນຕ່າງໆ ແລະຊອກຮູ້ວິທີການປູກຝັງພືດສະໝຸນໄພນາໆພັນ ປະກອບສ່ວນເຂົ້າໃນການສຶກສາ ແລະການວາງສະແດງ. ໃນແຜນການອານະຄົດໃນຕໍ່ໜ້າແມ່ນ ສວນແຫ່ງນີ້ຈະກາຍເປັນສູນລວມການວິໄຈພືດ ເພື່ອນຳໃຊ້ເຂົ້າໃນການຄົ້ນຄ້ວາ ແລະເປັນແຫຼ່ງຄວາມຮູ້ກ່ຽວກັບພືດພັນທຳມະຊາດຂອງເຂດ.

ພ້ອມກັບນັ້ນ, ບັນດາເຄື່ອງເທດສະໝຸນໄພແຫ້ງກໍ່ຖືກເກັບມ້ຽນໄວ້ຢ່າງດີໃນກ່ອງ ເຊິ່ງກໍ່ເປັນການສະສົມຢ່າງລະອຽດຂອງພືດຕ່າງໆທີ່ສາມາດຄົ້ນພົບໄດ້ ແລະເພື່ອເປັນການເກັບກຳຂໍ້ມູນໄວ້ໃຫ້ຮຸ່ນຫຼັງໄດ້ມີໂອກາດຮຽນຮູ້ໃນອະນາຄົດ.

ສະຖານທີ່ດັ່ງກ່າວນີ້ຕັ້ງແຄມສາຍນ້ຳຂອງຈາກທາງຕອນໃຕ້ຂອງຕົວເມືອງຫຼວງພຣະບາງ , ເຊິ່ງຄັ້ງໜຶ່ງເຄີຍເປັນສວນດອກໄມ້ສ່ວນຕົວຂອງຄອບຄົວກະສັດແຕ່ກ່ອນ. ຜູ້ທີ່ຢາກທ່ຽວຊົມ ຜາຕັດແກ້ ແມ່ນສາມາດເລີ່ມທີ່ສູນຮັບຕ້ອນຕັ້ງຢູ່ແຄມນ້ຳໃນຕົວເມືອງ, ຫຼັງຈາກນັ້ນກໍ່ຂີ່ເຮືອຂ້າມປະມານ 15 ນາທີກໍ່ຈະໄປເຖິງ.

ທີ່ສວນດອກໄມ້, ບັນດາແຂກທີ່ເຂົ້າມາທ່ຽວຊົມສາມາດຍ່າງຊົມສວນຕາມທາງຍ່າງພ້ອມອ່ານຂໍ້ມູນຄວາມຮູ້ກ່ຽວກັບພືດຕ່າງໆໄດ້, ແລະຈົບການທ່ຽວຊົມທີ່ສະຖານທີ່ພິເສດກັບການຮັບປະທານອາຫານໃນສວນນ້ຳທີ່ເຕັມໄປດ້ວຍດອກບົວບານລຽງລາຍກັນເຕັມອ່າງ ໃຫ້ຄວາມຮູ້ສຶກຜ່ອນຄາຍ ແລະສະຫງົບ.

ອາຫານທີ່ເສີບກໍ່ມີລົດຊາດທີ່ແຊບເປັນເອກະລັກ ທັງສົດ ແລະສະອາດປອດສານພິດ ໂດຍປຸງແຕ່ງຈາກຕຳລັບລາວ ແລະຜູ້ປຸງແຕ່ງກໍ່ເປັນຄົນລາວເອງທີ່ເຄີຍເຮັດອາຫານທີ່ປະເທດສະຫະລັດມາກ່ອນແລ້ວ, ແລະແນ່ນອນວ່າທຸກໆສ່ວນປະກອບຂອງອາຫານລ້ວນແລ້ວແຕ່ມາຈາກທ້ອງຖິ່ນຂອງຫຼວງພຣະບາງເອງ.

ນອກຈາກນັ້ນ, ທີ່ຜາຕັດແກ້ ຍັງໃຫ້ຫຼາຍກວ່າການພັກຜ່ອນແກ່ນັກທ່ອງທ່ຽວທີ່ມາຢ້ຽມຊົມ, ສວນແຫ່ງນີ້ຍັງເປັນສູນໃຫ້ຄວາມຮູ້ແກ່ຜູ້ເຂົ້າມາຢ້ຽມຊົມ ແລະປະຊາຊົນທ້ອງຖິ່ນກ່ຽວກັບຄວາມສຳຄັນຂອງການປົກປັກຮັກສາຊີວະນາໆພັນ ແລະສິ່ງແວດລ້ອມອີກດ້ວຍ.

ພະນັກງານທີ່ຜາຕັດແກ້ ຍັງມີໂຄງການສອນໂຮງຮຽນທ້ອງຖິ່ນກ່ຽວກັບການປູກຜັກປອດສານພິດ, ຊຸກຍູ້ ແລະສົ່ງເສີມໄວໜຸ່ມໃນການປົກປັກຮັກສາວັດທະນະທຳຮີດຄອງປະເພນີ ແລະຍັງມີໂຄງການສອນການຖ່າຍຮູບ, ກິດຈະກຳແຂ່ງຂັນ ແລະໂຄງການສ້າງສັນອື່ນໆ.

ສີໄມ້ລາຍລາຍມືຫັດຖະກຳກໍ່ເປັນອີກຂະແໜງໜຶ່ງທີ່ມີການສົ່ງເສີມ, ເຊິ່ງມີລາຍການຫຼາຍສິນຄ້າລວມທັງການພິມປຶ້ມຜາຕັດແກ້ ແລະນອກນັ້ນຍັງເປີດໂອກາດໃຫ້ຜູ້ທີ່ເຂົ້າມາທ່ຽວຊົມສາມາດຮຽນຮູ້ຈາກນັກສິລະປິນຫັດຖະກຳທ້ອງຖິ່ນໃນການນຳໃຊ້ສ່ວນປະກອບຈາກທຳມະຊາດເຂົ້າໃນການປະດິດ ແລະໃນຊີວິດປະຈຳວັນອີກດ້ວຍ.

ຖ້າຫາກທ່ານໄດ້ມາທ່ຽວເມືອງຫຼວງພຣະບາງ, ຢ່າພາດມາທ່ຽວຊົມສວນດອກໄມ້ທີ່ ຜາຕັດແກ້ ແຫ່ງນີ້, ທີ່ນອກຈາກຈະເຕັມໄປດ້ວຍທຳມະຊາດແລ້ວ ຍັງມີກິດຈະກຳອື່ນໆທີ່ໜ້າທ່ຽວຊົມ ແລະຮັບຮອງວ່າທ່ານຈະບໍ່ຜິດຫວັງຢ່າງແນ່ນອນ.